ຖ້າທຸກຄົນມີສ່ວນຮ່ວມໃນການຕິດຕາມກວດກາ ຈະເຮັດໃຫ້ສິ່ງກໍ່ສ້າງມີຄຸນນະພາບ ແລະ ນຳໃຊ້ໄດ້ຍາວນານ

ຫລຍ 3



ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ

ທີ່ຢູ່ຫ້ອງການ: ບ້ານ ສີສະຫວາດ, ນະຄອນຫຼວງວຽງຈັນ, ໂທ: 021- 261 479, 261 480, ແຟັກ: 021- 261 481, ຕູ້ໄປສະນີ 4625, ອີເມວ: info@prflaos.org, ເວັບໄຊ: www.prflaos.org

ສະໜັບສະໜູນໂດຍ:

ເປັນຫຍັງ ທລຍ ຈຶ່ງມີກົນໄກສະແດງຄຳຄິດຄຳເຫັນ?

ເພື່ອຮັບປະກັນໃຫ້ປະຊາຊົນ, ໂດຍສະເພາະ ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ໄດ້ສະແດງຄຳຄິດຄຳເຫັນ ແລະ ທຸກໆບັນຫາທີ່ຮັບມານັ້ນ ຕ້ອງໄດ້ຮັບການແກ້ໄຂຢ່າງທັນເວລາ ແລະ ມີປະສິດທິພາບ.

ທ່ານຈະໄດ້ຫຍັງຈາກ ການສະແດງຄຳຄິດຄຳເຫັນ?

1). ຮັກສາຜົນປະໂຫຍດຂອງທ່ານ ແລະ ທຸກຄົນໃນຊຸມຊົນ.
2). ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການມີຄວາມໂປ່ງໃສ ແລະ ເຮັດໃຫ້ສິ່ງກໍ່ສ້າງນັ້ນສາມາດນຳໃຊ້ໄດ້ຍາວນານ.
3). ທຸກຄົນໃນຊຸມຊົນມີຄວາມສາມັກຄີ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.
4). ສະກັດກັ້ນການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ບໍ່ຖືກຕ້ອງຕາມລະບຽບຂອງ ທລຍ.

ປະເພດຄຳຄິດຄຳເຫັນປະກອບມີ

1). ການຂໍຄວາມກະຈ່າງແຈ້ງ ຫລື ຢາກຮູ້ກ່ຽວກັບຂັ້ນຕອນ, ລະບຽບຫລັກການຂອງ ທລຍ.
2). ຄວາມບໍ່ພໍໃຈໃນການຕັດສິນໃຈ ຫລື ການຄັດເລືອກໂຄງການຍ່ອຍ.
3). ການຈັດຕັ້ງປະຕິບັດງານຂອງ ທລຍ ບໍ່ປະຕິບັດຕາມລະບຽບ ແລະ ຫລັກການທີ່ວາງໄວ້.

4). ການແຊກແຊງທີ່ບໍ່ເໝາະສົມຈາກບຸກຄົນພາຍນອກ.
5). ການນຳໃຊ້ງົບປະມານບໍ່ມີຄວາມໂປ່ງໃສ.
6). ຂໍ້ສະເໜີເພື່ອຂໍຄວາມຊ່ວຍເຫລືອທາງດ້ານວິຊາການກ່ຽວກັບການບູລະນະສ້ອມແປງໂຄງການຍ່ອຍ ຫລື ອື່ນໆຈາກຂະແໜງການທີ່ກ່ຽວຂ້ອງ.

ຊ່ອງທາງໃນການສະແດງຄຳຄິດຄຳເຫັນ

1). ໂທເຂົ້າຫາໂທລະສັບສາຍດ່ວນ ເບີ: 161 ໄດ້ ໂດຍຈະມີພະນັກງານພະນັກງານ ຢູ່ຂັ້ນສູນກາງເປັນຜູ້ຮັບສາຍ ໂດຍກົງ ໃນເວລາໃນລັດຖະການ ເລີ່ມແຕ່ເວລາ 08:00 ໂມງເຊົ້າ ຫາ 04:00 ໂມງແລງ. ນອກຈາກເວລາດັ່ງກ່າວຈະບໍ່ມີຜູ້ຮັບສາຍ ແຕ່ຈະມີເຄື່ອງຮັບສາຍອັດຕະໂນມັດເພື່ອໃຫ້ທ່ານໄດ້ຝາກຂໍ້ຄວາມໄວ້.
2). ນຳໃຊ້ຕູ້ຮັບຄຳຄິດຄຳເຫັນ: ຂຽນຄຳຄິດຄຳເຫັນໃສ່ເຈ້ຍ ຫລື ແບບຟອມແລ້ວເອົາໄປປ່ອນໃສ່ຕູ້ຮັບຄຳຄິດຄຳເຫັນທີ່ຕິດຢູ່ໃນກະດານຂ່າວຂອງບ້ານ, ກຸ່ມບ້ານ, ເມືອງ ແລະ ແຂວງ.
3). ສະເໜີຄຳຄິດຄຳເຫັນທາງປາກເປົ່າ ໃນກອງປະຊຸມຕ່າງໆທີ່ຈັດຂຶ້ນຢູ່ແຕ່ລະຂັ້ນ ພາຍໃຕ້ຮອບວຽນໂຄງການຂອງທລຍ ຫລື ໃນເວລາການລົງຢ້ຽມຢາມຕ່າງໆ ຢູ່ໃນຂັ້ນທ້ອງຖິ່ນຂອງພະນັກງານ ທລຍ ຫລື ຜູ້ໃຫ້ທຶນ.

4). ຂຽນຄຳຄິດຄຳເຫັນຂອງທ່ານໃສ່ຊອງຈົດໝາຍແລ້ວສົ່ງເຂົ້າຕູ້ໄປສະນີ ເລກທີ: 4625 ຂອງ ທລຍ ນະຄອນຫລວງວຽງຈັນ.
5). ຂຽນຄຳຄິດຄຳເຫັນໃສ່ຫ້ອງສະແດງຄຳຄິດຄຳເຫັນຢູ່ໜ້າເວບໄຊຂອງ ທລຍ ຄື: www.prflaos.org ຫຼື ສົ່ງເຂົ້າທີ່ຢູ່ອີເມວຂອງ ທລຍ ຄື: prf.frm@gmail.com